# ແບບສຳຫຼວດຜົນຕອບຮັບຂອງຄອບຄົວ

ທ່ານພໍ່ແມ່ຂອງເດັກທີ່ເຄົາລົບ

ຂໍຂອບໃຈສຳລັບຄວາມຕັ້ງໃຈຂອງທ່ານໃນການຕື່ມ*ແບບສຳຫຼວດຜົນຕອບຮັບຂອງຄອບຄົວ* ຂອງຣັຖມິນນີໂຊຕາ. ຄຳຕອບຂອງທ່ານຈະໄດ້ຖືກຮັກສາເປັນຄວາມລັບ ແລະຈະບໍ່ຖືກເປີດເຜີຍແກ່ສະມາຊິກຂອງຄະນະIFSP ຂອງລູກຂອງທ່ານ. ໃນການປະສົມປະສານກັນກັບຄຳຕອບຈາກຄອບຄົວອື່ນໆ, ຄຳຕອບຂອງທ່ານຈະໄດ້ຖືກນຳໃຊ້ເພື່ອເພີ່ມຄວາມເຂັ້ມແຂງ ຂອງແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ (early intervention program) ໃນຊຸມຊົນຂອງທ່ານ. ທຸກຄຳຕອບຈາກຄອບຄົວໃນຣັຖມິນນີໂຊຕາ ຈະໄດ້ຖືກປະສົມປະສານກັນ ແລະ ລາຍງານຕໍ່ໄປຍັງ ກົມສຶກສາທິການຂອງສະຫະຣັຖອາເມລິກາ ເພື່ອເປັນໂຕຊີ້ບອກເຖິງຄວາມເຂັ້ມແຂງຂອ: ລະບົບການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ໃນທົ່ວຣັຖຂອງພວກເຮົາ.

Marty Smith, *ກົມສັກສາທັການຣັຖມັນນີໂຊຕາ*

**ຄຳແນະນຳ:**

ໃນໜ້າຕໍ່ລົງໄປນີ້, ກະລຸນາຂີດວົງມົນອ້ອມເອົາເລກທີ່ບົ່ງບອກເຖິງຄອບຄົວຂອງທ່ານນະປະຈຸບັນນີ້. ຖ້າຫາກຄຳອະທິບາຍໃດເກືອບວ່າບົ່ງບອກເຖິງຄອບຄົວຂອງທ່ານ, ແຕ່ວ່າບໍ່ຄ່ອນຂ້າງຖືກ ໃຫ້ໝາຍເອົາເລກທີ່ໜ້ອຍກວ່າເຊິ່ງຢູ່ເທິງຄຳອະທິບາຍ.ຍົກຕົວຢ່າງ, ຖ້າວ່າ ໃນຄຳອະທິບາຍໃນຂໍ້ທີ 3 ເກືອບວ່າບົ່ງບອກເຖິງຄອບຄົວຂອງທ່ານ, ແຕ່ບໍ່ຂ້ອນຂ້າງຖືກ, ໃຫ້ຂີດວົງມົນເອົາໝາຍເລກ 2 ແທນ

ທ່ານອາດຈະສັງເກດເຫັນຄຳຕອບເຊິ່ງໃຊ້ຄຳວ່າ "ພວກເຮົາ" . ນີ້ໝາຍເຖິງຄອບຄົວຂອງທ່ານ ໂດຍລວມແຕ່ ບໍ່ເປັນຫຍັງຖ້າຫາກທ່ານຕອບໃຫ້ກັບ ໂຕທ່ານເອງຜູດຽ: (ຕາມແນວຄິດ ຫຼື ປະສົບການຂອງທ່ານເອງ) ຫຼື ຕາມແນວຄິດ ແລະ ປະສົບການລວມຂອງຄອບຄົວລວມກັນ.

ກະລຸນາສົ່ງໄປສະນີ ແບບສຳຫຼວດທີ່ປະກອບສຳເລັດແລ້ວໃນຊອງທີ່ຈັດໄວ້ໃຫ້ ໄປຫາທີ່ຢູ່ຂ້າງລຸ່ມນີ້:

*Early Intervention Program, Family Outcomes Survey*
*Minnesota Department of Education*
*1500 Highway 36 West*
*Roseville, MN  55113*

**© 2005 SRI International.** Version: 12-16-05.
ພັດທະນາໂດຍສູນກາງຜົນຕອບຮັບໃນວັຍເດັກ (Early Childhood Outcomes Center) ພ້ອມດ້ວຍການສະໜັບສະໜູນຈາກ ຫ້ອງການໂຄງການການສຶກສາພິເສດ (Office of Special Education Programs), U.S. Department of Education.

*ແບບສໍາຫຼວດພົນຕອບຮັບຂອງຄອບຄົວ*

**ເຂົ້າໃຈຈຸດແຂງ, ຄວາມສາມາດ ແລະ ຄວາມຕ້ອງການພິເສດ ຂອງລູກທ່ານ**

1. ລູກຂອງທ່ານກໍາລັງເຕີບໃຫຍ່ ແລະ ຮຽນຮູ້. ທ່ານມີຄວາມເຂົ້າໃຈພັດທະນາການລູກຂອງທ່ານດີສໍ່າໃດ?

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ພວກເຮົາຫາກໍ່ເລີ່ມເຂົ້າໃຈພັດທະນາການ<br>ຂອງລູກຂອງພວກເຮົາ. | | ພວກເຮົາມີຄວາມເຂົ້າໃຈພັດທະນາການ<br>ລະດັບພື້ນຖານຂອງລູກຂອງພວກເຮົາ ແລະ<br>ພວກເຮົາຍັງຕ້ອງໄດ້ຮຽນຮູ້ຕື່ມອີກຫລາຍ. | | ພວກເຮົາມີຄວາມເຂົ້າໃຈພັດທະນາການ<br>ຂອງລູກພວກເຮົາດີພໍສົມຄວນ. | | ພວກເຮົາມີຄວາມເຂົ້າໃຈພັດທະນາການ<br>ຂອງລູກພວກເຮົາເປັນຢ່າງດີ. |

2. ເດັກບາງຄົນຕ້ອງການການເບິ່ງແຍງທາງສຸຂະພາບເປັນພິສດ, ຄວາມພິການ ຫຼື ມີພັດທະນາການຊ້າ. ທ່ານຮູ້ກ່ຽວກັບຄວາມຕ້ອງການພິເສດຂອງລູກທ່ານຫຼາຍສໍ່າໃດ?

ໝາຍເອົາຫ້ອງນີ້ຖ້າຫາກລູກຂອງທານບໍ່ມີຄວາມຕອງການພິເສດ ແລະ ໄປຫາຄໍາຖາມຂໍທີ 3

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ດຽວນີ້ພວກເຮົາບໍ່ຮູ້ຫຍັງຫຼາຍ. | | ພວກເຮົາໄດ້ຮຽນຮູ້ບາງສິ່ງບາງຢ່າງ<br>ແລະ ກໍ່ຍັງມີຫຼາຍຄໍາຖາມທີ່<br>ຫາຄໍາຕອບບໍ່ໄດ້. | | ພວກເຮົາຮູ້ຫຼາຍແລ້ວ ແຕ່ຍັງຈໍາເປັນ<br>ຫຼື ຕ້ອງການທີ່ຈະຮຽນຮູ້ຕື່ມອີກ. | | ດຽວນີ້ພວກເຮົາໝັ້ນໃຈວ່າ ພວກເຮົາຮູ້<br>ເປັນສ່ວນຫຼາຍໃນທຸກດ້ານທີ່ພວກເຮົາ<br>ຈໍາເປັນຕ້ອງຮູ້. |

3. ຜູ້ຊ່ຽວຊານທີ່ເຮັດວຽກຮ່ວມກັບທ່ານ ແລະ ລູກຂອງທ່ານ ຕ້ອງການຮູ້ວ່າສິ່ງທີ່ເຂົາກໍາລັງເຮັດນັ້ນແມ່ນເປັນໄປດ້ວຍດີ. ທ່ານສາມາດບອກໄດ້ບໍ່ວ່າລູກຂອງທ່ານກໍາລັງກ້າວໜ້າຫຼືບໍ່?

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ດຽວນີ້ພວກເຮົາບໍ່ສາມາດບອກໄດ້ວ່າ ລູກຂອງ<br>ພວກເຮົາກໍາລັງກ້າວໜ້າຫຼືບໍ່. | | ບາງຄັ້ງພວກເຮົາກໍ່ສາມາດບອກໄດ້ວ່າລູກຂອງ<br>ພວກເຮົາກໍາລັງກ້າວໜ້າຫຼືບໍ່<br>ແຕ່ພວກເຮົາຍັງຕ້ອງໄດ້ຮຽນຮູ້ຕື່ມອີກຫລາຍ. | | ທໍາມະດາແລ້ວພວກເຮົາສາມາດບອກໄດ້ວ່າ<br>ລູກຂອງພວກເຮົາກໍາລັງກ້າວໜ້າຫຼືບໍ່. | | ເກືອບວ່າທັງໝົດພວກເຮົາສາມາດບອກໄດ້ວ່າ<br>ລູກຂອງພວກເຮົາກໍາລັງກ້າວໜ້າຫຼືບໍ່. |

| Office Use Only | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| MARSS Number: | | | | | | | | | | | | | |

*ແບບສຳຫຼວດຜົນຕອບຮັບຂອງຄອບຄົວ*

## ການຮູ້ຈັກສິດທິຂອງທ່ານ ແລະ ການສະໜັບສະໜູນລູກຂອງທ່ານ

4. ມີຫຼາກຫຼາຍໆແຜນການທີ່ອາດມີຄວາມເໝາະສົມກັບລູກ ແລະ ຄອບຄົວຂອງທ່ານ. ທ່ານຮູ້ບໍວ່າມີແຜນການໃດແດ່ສຳລັບລູກແລະຄອບຄົວຂອງທ່ານ?

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ພວກເຮົາຫາກໍ່ເລີ່ມຮຽນຮູ້ກ່ຽວກັບ<br>ແຜນການ ແລະ ບໍລິການທີ່ມີຢູ່. | | ພວກເຮົາຮູ້ບາງແຜນການ ແລະ ບໍລິການ<br>ແລະພວກເຮົາຍັງຕ້ອງໄດ້ຮຽນຮູ້ຕື່ມອີກຫລາຍ. | | ພວກເຮົາຄິດວ່າພວກເຮົາຮັບຮູ້ເຖິງແຜນການ<br>ທີ່ມີຢູ່ເປັນສ່ວນຫຼາຍ. | | ພວກເຮົາຮັບຮູ້ເຖິງແຜນການ ແລະ ການບໍລິການ<br>ທີ່ມີຢູ່ເປັນຢ່າງດີ. |

5. ຫຼາຍຕໍ່ຫຼາຍຄັ້ງທີ່ພໍ່ແມ່ຂອງເດັກພົບປະກັບຜູ້ຊ່ຽວຊານເພື່ອວາງແຜນການບໍລິການ ແລະ ກິດຈະກຳ. ທ່ານມີຄວາມສະດວກສະບາຍສ່ຳໃດໃນການເຂົ້າຮ່ວມການພົບປະເຫຼົ່ານີ້?

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ດຽວນີ້ ພວກເຮົາບໍ່ມີຄວາມສະດວກ<br>ໃນການເຂົ້າຮ່ວມການພົບປະເລີຍ. | | ພວກເຮົາບໍ່ມີຄວາມສະດວກຫຼາຍ<br>ໃນການເຂົ້າຮ່ວມການພົບປະ<br>ແຕ່ພວກເຮົາກໍ່ເຂົ້າຮ່ວມນຳຢູ່. | | ພວກເຮົາຂ້ອນຂ້າງຈະມີຄວາມສະດວກ<br>ໃນການເຂົ້າຮ່ວມການພົບປະ. | | ພວກເຮົາມີຄວາມສະດວກຫຼາຍ<br>ໃນການເຂົ້າຮ່ວມການພົບປະ. |

6. ຄອບຄົວທີ່ມີເດັກທີ່ມີຄວາມຕ້ອງການພິເສດມີສິດທິ ແລະ ຄອບຄົວສາມາດເຮັດໄດ້ຫຼາຍສິ່ງຢ່າງຖ້າຫາກເຂົາເຈົ້າບໍ່ພໍໃຈ. ທ່ານຮູ້ດີສ່ຳໃດກ່ຽວກັບສິດທິຂອງທ່ານ ແລະ ສິ່ງທີ່ຈະຕ້ອງເຮັດຖ້າຫາກທ່ານບໍ່ພໍໃຈ?

ໝາຍເອົາຫ້ອງນີ້ຖ້າຫາກລູກຂອງທ່ານບໍ່ມີຄວາມຕ້ອງການພິເສດ ແລະ ໄປຫາຄຳຖາມຂໍ້ທີ 7

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ພວກເຮົາບໍ່ແນ່ໃຈກ່ຽວກັບສິດທິຂອງພວກເຮົາ<br>ຫຼື ສິ່ງທີ່ຈະເຮັດຖ້າຫາກພວກເຮົາບໍ່ພໍໃຈ. | | ພວກເຮົາເຂົ້າໃຈສິດທິຂັ້ນພື້ນຖານຂອງພວກເຮົາ<br>ແຕ່ພວກເຮົາບໍ່ແນ່ໃຈກ່ຽວກັບທາງເລືອກທັງໝົດ<br>ຖ້າພວກເຮົາບໍ່ມີຄວາມພໍໃຈ. | | ພວກເຮົາຄິດວ່າພວກເຮົາເຂົ້າໃຈຂ້ອນຂ້າງດີ<br>ກ່ຽວກັບສິດທິ ແລະ ສິ່ງທີ່ຈະເຮັດ<br>ຖ້າພວກເຮົາບໍ່ມີຄວາມພໍໃຈ. | | ພວກເຮົາມີຄວາມຮັບຮູ້ເຖິງສິດທິຂອງພວກເຮົາ<br>ເປັນຢ່າງດີ ແລະ ຮູ້ຢ່າງຈະແຈ້ງວ່າຈະເຮັດຫຍັງ<br>ແດ່ ຖ້າພວກເຮົາບໍ່ພໍໃຈ. |

| Office Use Only<br>MARSS Number: | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |

*ແບບສຳຫຼວດຜົນຕອບຮັບຂອງຄອບຄົວ*

ການຊ່ວຍເຫຼືອໃຫ້ລູກຂອງທ່ານໄດ້ມີພັດທະນາ ແລະ ຮຽນຮູ້

7. ພໍ່ແມ່ທຸກຄົນຊ່ວຍເຫຼືອລູກຂອງເຂົາເຈົ້າ ພັດທະນາ ແລະ ຮຽນຮູ້, ແຕ່ບາງຄັ້ງກໍ່ເປັນການຍາກທີ່ຈະຮູ້ວ່າຄວນຈະເຮັດຫຍັງແດ່. ທ່ານຈະອະທິບາຍຄວາມສາມາດຂອງທ່ານວ່າເປັນແນວໃດໃນການຊ່ວຍເຫຼືອລູກຂອງທ່ານ ພັດທະນາ ແລະ ຮຽນຮູ້?

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ພວກເຮົາຈຳເປັນຕ້ອງໄດ້ຮູ້ຫຼາຍສິ່ງຫຼາຍຢ່າງອີກ ກ່ຽວກັບວິທີການຊ່ວຍເຫຼືອລູກຂອງພວກເຮົາ ພັດທະນາ ແລະ ຮຽນຮູ້. | | ພວກເຮົາຮູ້ພື້ນຖານຂອງການຊ່ວຍເຫຼືອ ລູກຂອງພວກເຮົາ ພັດທະນາ ແລະ ຮຽນຮູ້ ແຕ່ພວກເຮົາກໍ່ຍັງມີຫຼາຍຄຳຖາມຢູ່. | | ພວກເຮົາຮູ້ສຶກຂ້ອນຂ້າງຈະໝັ້ນໃຈວ່າ ພວກເຮົາຮູ້ວິທີການທີ່ຈະຊ່ວຍເຫຼືອລູກພວກເຮົາ ພັດທະນາ ແລະ ຮຽນຮູ້. | | ພວກເຮົາໝັ້ນໃຈຫຼາຍວ່າ ພວກເຮົາຮູ້ວິທີການທີ່ຈະຊ່ວຍເຫຼືອລູກຂອງພວກເຮົາ ພັດທະນາ ແລະ ຮຽນຮູ້. |

8. ພໍ່ແມ່ທຸກຄົນພະຍາຍາມຊ່ວຍເຫຼືອໃຫ້ລູກຂອງເຂົາເຈົ້າຮູ້ຈັກການປະພຶດໃນທາງທີ່ເຂົາເຈົ້າຕ້ອງການ, ແຕ່ບາງຄັ້ງກໍ່ເປັນການຍາກທີ່ຈະຮູ້ວ່າຄວນຈະເຮັດຫຍັງແດ່.
ທ່ານຈະອະທິບາຍຄວາມສາມາດຂອງທ່ານວ່າເປັນແນວໃດໃນການຊ່ວຍເຫຼືອລູກຂອງທ່ານໃຫ້ຮູ້ຈັກການປະພຶດໃນທາງທີ່ທ່ານຕ້ອງການ'

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ພວກເຮົາຈຳເປັນຕ້ອງໄດ້ຮູ້ຫຼາຍສິ່ງຢ່າງອີກ ກ່ຽວກັບວິທີການຊ່ວຍເຫຼືອລູກຂອງພວກເຮົາ ປະພຶດໃນສິ່ງທີ່ພວກເຮົາຕ້ອງການ. | | ພວກເຮົາຮູ້ພື້ນຖານຂອງການຊ່ວຍເຫຼືອ ລູກຂອງພວກເຮົາ ໃນການປະພຶດ ແຕ່ພວກເຮົາກໍ່ຍັງມີຫຼາຍຄຳຖາມຢູ່. | | ພວກເຮົາຮູ້ສຶກຂ້ອນຂ້າງຈະໝັ້ນໃຈວ່າ ພວກເຮົາຮູ້ວິທີການທີ່ຈະຊ່ວຍເຫຼືອລູກພວກເຮົາ ໃນການປະພຶດ. | | ພວກເຮົາໝັ້ນໃຈຫຼາຍວ່າ ພວກເຮົາຮູ້ວິທີການທີ່ຈະຊ່ວຍເຫຼືອລູກພວກເຮົາ ໃນການປະພຶດ. |

9. ຄອບຄົວຂອງທ່ານໄດ້ເຮັດວຽກຮ່ວມກັບຜູ້ຊ່ຽວຊານເພື່ອພັດທະນາແຜນການຊ່ວຍເຫຼືອລູກຂອງທ່ານ ຮຽນຮູ້ທັກສະໃໝ່ ແລະ ການປະພຶດ. ທ່ານສາດມາດຊ່ວຍເຫຼືອລູກຂອງທ່ານຮຽນຮູ້ ແລະ
ຝຶກແອບທັກສະເຫຼົ່ານີ້ ທີ່ບ້ານ ຫຼື ຊຸມຊົນຂອງທ່ານ ໄດ້ຫຼາຍສ່ຳໃດ?

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ພວກເຮົາຍັງບໍ່ທັນໄດ້ເລີ່ມການຊ່ວຍເຫຼືອ ລູກຂອງພວກເຮົາໃນການຮຽນຮູ້ ແລະ ຝຶກແອບ ທັກສະ ແລະ ການປະພຶດເຫຼົ່ານີ້ເທື່ອ. | | ພວກເຮົາໄດ້ເລີ່ມການຊ່ວຍເຫຼືອ ລູກຂອງພວກເຮົາໃນການຮຽນຮູ້ ແລະ ຝຶກແອບ ທັກສະ ແລະ ການປະພຶດເຫຼົ່ານີ້ ແຕ່ ຍັງບໍ່ທັນເປັນປົກກະຕິເທື່ອ. | | ພວກເຮົາໄດ້ຊ່ວຍເຫຼືອລູກຂອງພວກເຮົາ ໃນການຮຽນຮູ້ ແລະ ຝຶກແອບທັກສະ ແລະ ການປະພຶດເຫຼົ່ານີ້ ເລື້ອຍໆແຕ່ ຍັງບໍ່ທັນເປັນ ປົກກະຕິຕາມທີ່ພວກເຮົາຕ້ອງການ. | | ພວກເຮົາໄດ້ຊ່ວຍເຫຼືອລູກຂອງພວກເຮົາ ໃນການຮຽນຮູ້ ແລະ ຝຶກແອບທັກສະ ແລະ ການປະພຶດເຫຼົ່ານີ້ຢ່າງເປັນປົກກະຕິ ຕະຫຼອດວັນ. |

| Office Use Only | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| MARSS Number: | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |

*ແບບສຳຫຼວດຜົນຕອບຮັບຂອງຄອບຄົວ*

**ການມີລະບົບການສະໜັບສະໜູນ**

10. ຫຼາຍໆຄົນຮູ້ສຶກວ່າການສົນທະນາກັບຄົນອື່ນສາມາດຊ່ວຍໃຫ້ເຂົາເຈົ້າແກ້ໄຂບັນຫາໄດ້ ຫຼື ສະເຫຼີມສະຫຼອງເມື່ອສິ່ງດີໆເກີດຂຶ້ນ. ຄອບຄົວຂອງທ່ານມີຜູ້ໃດແດ່ບໍທີ່ທ່ານເຊື່ອຖື ທີ່ຈະຟັງ ແລະ ລົມກັບທ່ານໄດ້?

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ດຽວນີ້ ພວກເຮົາບໍ່ມີຜູ້ໃດເລີຍ ທີ່ພວກເຮົາຈະສາມາດລົມນຳໄດ້ ກ່ຽວກັບສິ່ງທີ່ກຳລັງເກີດຂື້ນກັບຊີວິດຂອງພວກເຮົາ. | | ພວກເຮົາສາມາດຊອກຫາໄດ້ຢ່າງໜ້ອຍໜຶ່ງຄົນທີ່ພວກເຮົາສາມາດລົມນຳໄດ້ ແຕ່ ບໍ່ຄ່ອຍມີຄວາມພໍໃຈປານໃດກັບສະຖານະການ. | | ປົກກະຕິແລ້ວພວກເຮົາຈະມີຄົນອື່ນໆທີ່ພວກເຮົາສາມາດລົມນຳໄດ້ ກ່ຽວກັບສິ່ງຕ່າງໆ. | | ແນ່ນອນທີ່ສຸດມີຫຼາຍຄົນໃນຊີວິດຂອງພວກເຮົາທີ່ພວກເຮົາສາມາດລົມນຳໄດ້ ເມື່ອໃດກໍ່ຕາມທີ່ພວກເຮົາຕ້ອງການ. |

11. ບາງຄັ້ງໃນຄອບຄົວຈຳເປັນຕ້ອງໄດ້ອີງໃສ່ຄົນອື່ນໃນການຊ່ວຍເຫຼືອເມື່ອເຂົາເຈົ້າຕ້ອງການ, ຕົວຢ່າງການຈັດຍານພາຫານະໃຫ້, ການເຮັດພາລະກິດໃຫ້, ຫຼື ການເບິ່ງແຍງລູກໃຫ້ໃນໄລຍະເວລາສັ້ນໆ. ທ່ານມີຜູ້ໃດໜຶ່ງບໍທີ່ສາມາດຮ້ອງຫາໄດ້ເມື່ອທ່ານຕ້ອງການຄວາມຊ່ວຍເຫຼືອກັບເລື່ອງຕ່າງໆ?

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ດຽວນີ້ ພວກເຮົາບໍ່ມີຜູ້ໃດເລີຍ ທີ່ພວກເຮົາຈະສາມາດຮ້ອງຫາໄດ້ເມື່ອພວກເຮົາຕ້ອງການຄວາມຊ່ວຍເຫຼືອໃນເລື່ອງຕ່າງໆ. | | ໃນເວລາສຸກເສີນ, ພວກເຮົາມີຄົນທີ່ພວກເຮົາສາມາດຮ້ອງຫາຄວາມຊ່ວຍເຫຼືອໄດ້, ແຕ່ບໍ່ແມ່ນກັບເລື່ອງທີ່ເກີດຂື້ນໃນແຕ່ລະວັນ. | | ປົກກະຕິແລ້ວພວກເຮົາມີບາງຄົນ ທີ່ພວກເຮົາສາມາດຮ້ອງຫາຄວາມຊ່ວຍເຫຼືອໄດ້ເມື່ອພວກເຮົາຕ້ອງການ. | | ເກືອບວ່າຕະຫຼອດເລີຍທີ່ພວກເຮົາຈະມີຄົນອື່ນໆທີ່ພວກເຮົາສາມາດຮ້ອງຫາຄວາມຊ່ວຍເຫຼືອໄດ້ເມື່ອພວກເຮົາຕ້ອງການ. |

12. ຄອບຄົວສ່ວນຫຼາຍມີສິ່ງຫຼາຍຢ່າງທີ່ເຂົາເຈົ້າເຮັດແລ້ວມີຄວາມມ່ວນຊື່ນໃນການເຮັດ. ຄອບຄົວຂອງທ່ານສາມາດຫາເຮັດໃນສິ່ງທີ່ທ່ານມ່ວນຊື່ນໄດ້ຫຼາຍປານໃດ?

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ດຽວນີ້ ມັນຍາກຫຼາຍທີ່ຈະຫາສິ່ງຕ່າງໆເຮັດແລ້ວມີຄວາມມ່ວນຊື່ນກັບມັນ. | | ພວກເຮົາສາມາດເຂົ້າຮ່ວມໃນກິດຈະກຳບາງຢ່າງທີ່ພວກເຮົາມ່ວນຊື່ນ, ແຕ່ວ່າບໍ່ຄ່ອຍໃກ້ຄຽງກັບສິ່ງທີ່ພວກເຮົາຕ້ອງການ. | | ພວກເຮົາສາມາດເຂົ້າຮ່ວມໃນຫຼາຍໆກິດຈະກຳທີ່ພວກເຮົາມີຄວາມມ່ວນຊື່ນ. | | ພວກເຮົາສາມາດເຂົ້າຮ່ວມໃນເກືອບທຸກກິດຈະກຳທີ່ພວກເຮົາມີຄວາມມ່ວນຊື່ນ. |

| Office Use Only<br>MARSS Number: | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |

*ແບບສຳຫຼວດຜົນຕອບຮັບຂອງຄອບຄົວ*

## ການເຂົ້າເຖິງຊຸມຊົນຂອງທ່ານ

13. ເດັກທຸກຄົນຕ້ອງການການປິ່ນປົວທາງການແພດ. ທ່ານຈະອະທິບາຍກ່ຽວກັບການປິ່ນປົວທາງການແພດທີ່ທ່ານໄດ້ຮັບດຽວນີ້ສຳລັບລູກຂອງທ່ານວ່າເປັນແນວໃດ?

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ພວກເຮົາບໍ່ໄດ້ຮັບການປິ່ນປົວທາງການແພດ ທີ່ຕ້ອງການສຳລັບລູກຂອງພວກເຮົາ. | | ພວກເຮົາໄດ້ຮັບການປິ່ນປົວທາງການແພດ ຈຳນວນໜຶ່ງແຕ່ວ່າຍັງອີກຍາວໄກ ກ່ອນທີ່ ຈະເປັນໄປຕາມໃນສິ່ງທີ່ພວກເຮົາຕ້ອງການ. | | ພວກເຮົາໄດ້ຮັບການປິ່ນປົວທາງການແພດທີ່ດີ ສຳລັບລູກຂອງພວກເຮົາ. | | ພວກເຮົາໄດ້ຮັບການປິ່ນປົວທາງການແພດທີ່ ດີເລີດສຳລັບລູກຂອງພວກເຮົາ. |

14. ຫຼາຍຄອບຄົວຕ້ອງການການເບິ່ງແຍງເດັກທີ່ມີຄຸນນະພາບ. ໃນທີ່ນີ້, ພວກເຮົາບໍ່ໄດ້ໝາຍເຖິງການເບິ່ງແຍງເດັກຊົ່ວຄາວ ແຕ່ເປັນການເບິ່ງແຍງເດັກປະຈຳ, ບໍ່ວ່າຈະເປັນສ່ວນໜຶ່ງຂອງມື້ ຫຼື ໝົດມື້. ທ່ານຈະອະທິບາຍການເບິ່ງແຍງເດັກທີ່ທ່ານໄດ້ຮັບຢູ່ໃນປະຈຸບັນນີ້ສຳລັບລູກຂອງທ່ານວ່າເປັນແນວໃດ?

ໝາຍເອົາຫອງນີ ຖາຫາກທານບໍໄດຕອງການການເບີງແຍງເດັກ ແລະ ໄປຫາຄໍາຖາມຂໍທີ 15.

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ພວກເຮົາບໍ່ໄດ້ຮັບການເບິ່ງແຍງເດັກທີ່ພວກເຮົາ ຕ້ອງການ ຫຼື ເນື່ອງຈາກຄວາມຕ້ອງການ ພິເສດຂອງລູກພວກເຮົາ, ພວກເຮົາຈຶ່ງຕົກລົງໃຈ ບໍ່ຊອກຫາມັນ. | | ພວກເຮົາໄດ້ຮັບການເບິ່ງແຍງເດັກຈຳນວນໜຶ່ງ ແຕ່ວ່າຍັງອີກຍາວໄກ ກ່ອນທີ່ຈະເປັນໄປຕາມ ໃນສິ່ງທີ່ພວກເຮົາຕ້ອງການ. | | ພວກເຮົາໄດ້ຮັບການເບິ່ງແຍງເດັກທີ່ດີ ສຳລັບລູກຂອງພວກເຮົາ. | | ພວກເຮົາໄດ້ຮັບການເບິ່ງແຍງເດັກທີ່ດີເລີດ ສຳລັບລູກຂອງພວກເຮົາ. |

15. ຫຼາຍຄອບຄົວຕ້ອງການໃຫ້ລູກຂອງເຂົາເຈົ້າຫຼິ້ນກັບເດັກຄົນອື່ນໆ ຫຼື ເຂົ້າຮ່ວມໃນສາສະໜາ, ຊຸມຊົນ ຫຼື ກິດຈະກຳສັງຄົມຕ່າງໆ. ທ່ານຈະອະທິບາຍການເຂົ້າຮ່ວມໃນກິດຈະກຳເຫຼົ່ານີ້ຂອງລູກຂອງທ່ານວ່າເປັນແນວໃດ?

ໝາຍເອົາຫອງນີ ຖາຫາກທານບໍໄດຕອງໃຫລູກຂອງທານເຂົາຮອມໃນກິດຈະກໍາເຊັນນັນ ແລະ ໄປຫາຄໍາຖາມຂໍທີ 16.

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ລູກຂອງພວກເຮົາບໍ່ເຂົ້າຮ່ວມໃນກິດຈະກຳເຫຼົ່ານັ້ນ ຫຼື ເນື່ອງຈາກຄວາມຕ້ອງການ ພິເສດຂອງລູກພວກເຮົາ, ພວກເຮົາຈຶ່ງຕົກລົງໃຈ ບໍ່ຊອກຫາມັນ. | | ລູກຂອງພວກເຮົາໄດ້ເຂົ້າຮ່ວມໃນບາງກິດຈະກຳ ທາງສັງຄົມ ແລະ ຊຸມຊົນ ແຕ່ວ່າຍັງອີກຍາວໄກ ກ່ອນທີ່ຈະເປັນໄປຕາມ ໃນສິ່ງທີ່ພວກເຮົາຕ້ອງການ. | | ລູກຂອງພວກເຮົາໄດ້ເຂົ້າຮ່ວມໃນກິດຈະກຳ ທາງສັງຄົມ ຫຼື ຊຸມຊົນທີ່ດີ. | | ລູກຂອງພວກເຮົາໄດ້ເຂົ້າຮ່ວມໃນກິດຈະກຳ ທາງສັງຄົມ ຫຼື ຊຸມຊົນທີ່ດີເລີດ. |

| Office Use Only | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| MARSS Number: | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |

*ແບບສຳຫຼວດຜົນຕອບຮັບຂອງຄອບຄົວ*

ຄວາມຮູ້ສຶກຂອງທ່ານກ່ຽວກັບແຜນການ **Early Intervention** (ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ)

16. ໃນດ້ານໃດແດ່ທີ່ທ່ານເຫັນໄດ້ວ່າ ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ໄດ້ຊ່ວຍໃຫ້ຄອບຄົວຂອງທ່ານຮູ້ຈັກ ແລະ ເຂົ້າໃຈໃນສິດທິຂອງທ່ານ?.

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ຍັງບໍ່ໄດ້ຊ່ວຍໃຫ້ພວກເຮົາຮູ້ກ່ຽວກັບສິດທິຂອງຄອບຄົວພວກເຮົາ. | | ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ໄດ້ເຮັດໜ້າທີ່ໃດໜຶ່ງຂອງມັນ ເພື່ອຊ່ວຍໃຫ້ພວກເຮົາຮູ້ກ່ຽວກັບສິດທິຂອງພວກເຮົາ. | | ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ໄດ້ຊ່ວຍພວກເຮົາເປັນຢ່າງດີ ເພາະສະນັ້ນພວກເຮົາຈຶ່ງຮູ້ກ່ຽວກັບສິດທິຂອງຄອບຄົວພວກເຮົາ. | | ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ໄດ້ໄດ້ເຮັດໜ້າທີ່ຂອງມັນຢ່າງດີເລີດເພື່ອຊ່ວຍເຫຼືອໃຫ້ພວກເຮົາຮູ້ສິດທິຂອງຄອບຄົວພວກເຮົາ. |

17. ໃນດ້ານໃດແດ່ທີ່ທ່ານເຫັນໄດ້ວ່າ ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ໄດ້ຊ່ວຍໃຫ້ຄອບຄົວຂອງທ່ານສື່ສານຄວາມຕ້ອງການຂອງລູກຂອງທ່ານຢ່າງມີປະສິດທິພາບ?.

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ຍັງບໍ່ທັນໄດ້ຊ່ວຍໃຫ້ພວກເຮົາສື່ສານຄວາມຕ້ອງການຂອງລູກຂອງພວກເຮົາຢ່າງມີປະສິດທິພາບເທື່ອ. | | ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ໄດ້ເຮັດໜ້າທີ່ຈຳນວນໃດໜຶ່ງເພື່ອຊ່ວຍເຫຼືອໃຫ້ພວກເຮົາສາມາດສື່ສານຄວາມຕ້ອງການຂອງລູກຂອງພວກເຮົາຢ່າງມີປະສິດທິພາບ. | | ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ໄດ້ເຮັດໜ້າທີ່ຂອງມັນເປັນຢ່າງດີເພື່ອຊ່ວຍເຫຼືອໃຫ້ພວກເຮົາສາມາດສື່ສານຄວາມຕ້ອງການຂອງລູກຂອງພວກເຮົາຢ່າງມີປະສິດທິພາບ. | | ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ໄດ້ເຮັດໜ້າທີ່ຂອງມັນຢ່າງດີເລີດເພື່ອຊ່ວຍເຫຼືອໃຫ້ພວກເຮົາສາມາດສື່ສານຄວາມຕ້ອງການຂອງລູກຂອງພວກເຮົາຢ່າງມີປະສິດທິພາບ. |

18. ໃນດ້ານໃດແດ່ທີ່ທ່ານເຫັນໄດ້ວ່າ ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ໄດ້ຊ່ວຍໃຫ້ຄອບຄົວຂອງທ່ານ ສາມາດຊ່ວຍເຫຼືອ ລູກຂອງທ່ານ ພັດທະນາ ແລະ ຮຽນຮູ້?.

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|
| ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ຍັງບໍ່ທັນໄດ້ຊ່ວຍໃຫ້ພວກເຮົາ ຊ່ວຍລູກຂອງພວກເຮົາພັດທະນາ ແລະ ຮຽນຮູ້ ເທື່ອ. | | ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ໄດ້ເຮັດໜ້າທີ່ຈຳນວນໃດໜຶ່ງ ເພາະສະນັ້ນພວກເຮົາຈຶ່ງສາມາດຊ່ວຍລູກຂອງພວກເຮົາພັດທະນາ ແລະ ຮຽນຮູ້. | | ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ໄດ້ເຮັດໜ້າທີ່ຂອງມັນເປັນຢ່າງດີເພື່ອຊ່ວຍພວກເຮົາຊ່ວຍລູກຂອງພວກເຮົາພັດທະນາ ແລະ ຮຽນຮູ້. | | ແຜນການເຂົ້າຊ່ວຍເຫຼືອເດັກແຕ່ຍັງນ້ອຍ ໄດ້ເຮັດໜ້າທີ່ຂອງມັນຢ່າງດີເລີດເພື່ອຊ່ວຍພວກເຮົາຊ່ວຍລູກຂອງພວກເຮົາພັດທະນາ ແລະ ຮຽນຮູ້. |

| Office Use Only | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| MARSS Number: | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |